**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 62 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 08/07/22

**ມະຕິ**

**ກອງປະຊຸມສະພາແຫ່ງຊາດ**

**ວ່າດ້ວຍການຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາຄວາມຄືບໜ້າ ການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາ ແລະ ທິດທາງແຜນການຕິດຕາມກວດກາ ໃນ 6 ເດືອນທ້າຍປີ 2022 ແລະ ປະຈຳປີ 2023 ຂອງສະພາແຫ່ງຊາດ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ;
- ອີງຕາມ ກົດໝາຍວ່າດ້ວຍ ການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມາດຕາ 15 ແຜນການຕິດຕາມກວດກາຂອງສະພາແຫ່ງຊາດ;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 03/ສພຊ ແລະ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021;
- ອີງຕາມ ບົດລາຍງານຜົນການຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາໃນຕໍ່ໜ້າຂອງ ສະພາແຫ່ງຊາດ ຄັ້ງວັນທີ 20-21 ມິຖຸນາ 2022.

ຜ່ານການຮັບຟັງການລາຍງານຂອງຄະນະປະຈຳສະພາແຫ່ງຊາດ ແລະ ການຄົ້ນຄວ້າປະກອບຄຳເຫັນຢ່າງເລິກເຊິ່ງຂອງກອງປະຊຸມຕໍ່ບົດລາຍງານຜົນການຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາໃນຕໍ່ໜ້າ ຂອງສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ວັນທີ 24 ມິຖຸນາ 2022,

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ ການຈັດຕັ້ງປະຕິບັດວາລະແຫ່ງຊາດໃນໄລຍະຜ່ານມາ**

ກອງປະຊຸມເຫັນດີຮັບຮອງເອົາບົດລາຍງານ ກ່ຽວກັບຜົນການຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃນໄລຍະຜ່ານມາຂອງ ສະພາແຫ່ງຊາດ ແລະ ສະແດງຄວາມຊົມເຊີຍ ຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດຂອງ ລັດຖະບານ ຕາມພາລະບົດ

ບາດຂອງ ສະພາແຫ່ງຊາດ, ພ້ອມກັນນັ້ນ ໄດ້ສະແດງຄວາມຊົມເຊີຍ ລັດຖະບານ ທີ່ໄດ້ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດດັ່ງກ່າວ ເລີ່ມແຕ່ ເດືອນສິງຫາ ປີ 2021 ຫາ ເດືອນມິຖຸນາ ປີ 2022 ຊຶ່ງໄດ້ຍົກໃຫ້ເຫັນຄວາມຄືບໜ້າທີ່ພົ້ນເດັ່ນ ໂດຍສະເພາະໄດ້ຜັນຂະຫຍາຍເປັນນິຕິກຳ, ແຜນການ, ການຈັດຕັ້ງປະຕິບັດຕົວຈິງ ແລະ ມີຜົນສຳເລັດໃນຫຼາຍດ້ານ; ຄຽງຄູ່ກັນນັ້ນ, ໄດ້ຍົກໃຫ້ເຫັນບັນຫາຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຊຶ່ງຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ.

**ມາດຕາ 2 ຮັບຮອງເອົາແຜນວຽກຈຸດສຸມການຕິດຕາມກວດກາ 2 ວາລະແຫ່ງຊາດ 6 ເດືອນ ທ້າຍປີ 2022 ແລະ ປີ 2023**

ເພື່ອຮັບປະກັນໃຫ້ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສາມາດເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດ ມະຕິຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມ ຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໃຫ້ບັນລຸຕາມຄາດໝາຍສູ້ຊົນ, ແຜນວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດ, ກອງປະຊຸມ ເຫັນດີຮັບຮອງເອົາແຜນວຽກຈຸດສຸມການຕິດຕາມກວດກາ ສໍາລັບ 6 ເດືອນທ້າຍປີ 2022 ແລະ ປະຈຳປີ 2023 ດັ່ງນີ້:

1. **ເນື້ອໃນວຽກຈຸດສຸມການຕິດຕາມກວດກາ ການປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ**

ອີງຕາມແຜນວຽກຈຸດສຸມທີ່ໄດ້ກຳນົດໃນມະຕິວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021, ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສຸມໃສ່ປະຕິບັດພາລະບົດບາດຕິດຕາມກວດກາຫົວຂໍ້ສະເພາະຕາມເງື່ອນໄຂຈຸດພິເສດຕົວຈິງຂອງແຕ່ລະທ້ອງຖິ່ນ ດັ່ງນີ້:

1) ຕິດຕາມກວດການໂຄງການ ການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ໂດຍການນຳໃຊ້ກາລະໂອກາດ ແລະ ທ່າແຮງບົ່ມຊ້ອນທີ່ໄດ້ປຽບໃນເງື່ອນໄຂເຊື່ອມໂຍງ ແລະ ເຊື່ອມຈອດຕາມແລວທາງເສດຖະກິດກັບພາກພື້ນ ແລະ ສາກົນ ເພື່ອສ້າງຖານລາຍຮັບໃຫ້ໄດ້ໄວ ແລະ ສ້າງພື້ນຖານເສດຖະກິດແຫ່ງຊາດໃຫ້ເຂັ້ມແຂງ ແລະ ຍືນຍົງ;
2) ຕິດຕາມກວດກາໂຄງການ ການສ້າງຄວາມເຂັ້ມແຂງທາງດ້ານການເກັບລາຍຮັບເຂົ້າງົບປະມານ ໂດຍຫັນເປັນທັນສະໄໝແບບດີຈີຕອນ ເພື່ອຮັບປະກັນການເກັບລາຍຮັບໃຫ້ຄົບຖ້ວນ, ສະກັດກັ້ນການຮົ່ວໄຫຼໄປພ້ອມກັບການຂະຫຍາຍຖານລາຍຮັບໃໝ່ທີ່ຍັງມີທ່າແຮງ; ປັບປຸງນິຕິກຳ, ກົນໄກການບໍລິການ ແລະ ບຸກຄະລາກອນ ໃຫ້ມີຄຸນນະພາບ ແລະ ປະສິດທິພາບ;
3) ຕິດຕາມກວດກາໂຄງການ ການຍົກສູງປະສິດທິຜົນການຄຸ້ມຄອງລາຍຈ່າຍງົບປະມານຂອງລັດ, ສ້າງແຜນຍຸດທະສາດແກ້ໄຂໜີ້ສິນສາທາລະນະໃນແຕ່ລະໄລຍະທີ່ຮັບປະກັນແຫຼ່ງທຶນຊຳລະທີ່ໝັ້ນຄົງ ຕາມກົດໝາຍ, ການແກ້ໄຂໜີ້ຕ້ອງສົ່ງຂອງວິສາຫະກິດລັດ ທີ່ລັດຖະບານຄ້ຳປະກັນ, ດຳເນີນການປະຢັດຕ້ານການຟຸມເຟືອຍ ແລະ ຈຳກັດລາຍຈ່າຍງົບປະມານທີ່ບໍ່ຈຳເປັນ;
4) ຕິດຕາມກວດກາໂຄງການ ການສ້າງສະຖຽນລະພາບດ້ານເງິນຕາ ເປັນຕົ້ນ ການຄວບຄຸມອັດຕາເງິນເຟີ້, ຄຸ້ມຄອງອັດຕາແລກປ່ຽນ, ສ້າງຄັງສຳຮອງເງິນຕາຕ່າງປະເທດ, ຫຼຸດຜ່ອນໜີ້ທີ່ບໍ່ເກີດດອກອອກຜົນ, ສ້າງການຫັນປ່ຽນໃໝ່ໃນລະບົບຄຸ້ມຄອງເງິນຕາຕ່າງປະເທດໃຫ້ເຂັ້ມແຂງ ເພື່ອສາມາດຊໍາລະສະສາງກັບສາກົນ;
5) ຕິດຕາມກວດກາໂຄງການ ການຍົກສູງປະສິດທິພາບການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ມີຜົນສັກສິດ;
6) ຕິດຕາມກວດກາ ໂຄງການພັດທະນາເສດຖະກິດ-ສັງຄົມ ທີ່ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ ຂອງປະຊາຊົນ ແລະ ສິ່ງແວດລ້ອມ;
7) ຕິດຕາມກວດກາ ການຈັດຕັ້ງປະຕິບັດ ສົນທິສັນຍາ ແລະ ສັນຍາສາກົນ ໃນຂົງເຂດເສດຖະກິດ, ການຄ້າ, ການລົງທຶນ ທີ່ ສປປ ລາວ ເປັນພາຄີ ແລະ ໂຄງການລົງທຶນຂະໜາດໃຫຍ່ຂອງຕ່າງປະເທດຢູ່ ສປປ ລາວ.

**2. ເນື້ອໃນວຽກຈຸດສຸມການຕິດຕາມກວດກາການປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂບັນຫາຢາເສບຕິດ**

ອີງຕາມ ແຜນວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນ ມະຕິວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂບັນຫາຢາເສບຕິດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ສຸມໃສ່ປະຕິ ບັດ 6 ແຜນວຽກຈຸດສຸມ ດັ່ງນີ້:

1) ຕິດຕາມກວດກາໂຄງການສ້າງຄວາມຮັບຮູ້ໃນທົ່ວສັງຄົມດ້ວຍການສຶກສາອົບຮົມ, ການໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ  ຜົນຮ້າຍຂອງຢາເສບຕິດ;
2) ຕິດຕາມກວດກາໂຄງການສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບບັນຫາຢາເສບຕິດ;
3) ຕິດຕາມກວດກາໂຄງການ ປັບປຸງກົງຈັກການຈັດຕັ້ງ ແລະ ຍົກລະດັບຄວາມສາມາດໃນການເຄື່ອນໄຫວຂອງອົງການສືບສວນ-ສອບສວນ, ອົງການສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການປະຕິບັດຄຳຕັດສິນຂອງສານ ແລະ ພາກສ່ວນກ່ຽວຂ້ອງຕໍ່ການແກ້ໄຂບັນຫາຢາເສບຕິດ;
4) ຕິດຕາມກວດກາໂຄງການ ຍົກສູງປະສິດທິພາບ ດ້ານການຄຸ້ມຄອງ, ຊີ້ນຳໃນການຈັດຕັ້ງປະຕິບັດຮອບດ້ານໃນວຽກງານແກ້ໄຂບັນຫາຢາເສບຕິດ;
5) ຕິດຕາມກວດກາໂຄງການ ປັບປຸງຂີດຄວາມສາມາດ ການເຄື່ອນໄຫວເຮັດໜ້າທີ່ ຂອງລະບົບການເມືອງແຕ່ລະຂັ້ນ ເພື່ອຊີ້ນຳ-ນຳພາ ແກ້ໄຂບັນຫາຢາເສບຕິດ ທີ່ເກີດຂຶ້ນຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ;
6) ຕິດຕາມກວດກາໂຄງການຮ່ວມມືສາກົນ.

(ເນື້ອໃນລະອຽດກ່ຽວກັບແຜນວຽກຕິດຕາມກວດກາ ໄດ້ກຳນົດໄວ້ໃນຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດ)

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ**

ກອງປະຊຸມ ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ ດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ ອອກຄຳແນະນຳລະອຽດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດມີຄວາມເປັນເອກະພາບທາງດ້ານຫຼັກການ, ວິທີການ, ເນື້ອໃນວຽກຈຸດສຸມບຸລິມະສິດ ແລະ ມາດຕະການປະຕິ ບັດຕົວ ຈິງ;
2. ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ຜັນຂະຫຍາຍມະຕິສະບັບນີ້ເປັນແຜນການຕິດຕາມກວດກາລະອຽດ ແລະ ຊີ້ນຳການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ບັນດາກຳມາທິການ ສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳ ຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນ;
4. ບັນດາກະຊວງ,  ອົງການ ທັງສູນກາງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງໃຫ້ການຮ່ວມມື ແລະ ສະໜອງເອກະສານ ແລະ ຂໍ້ມູນຂ່າວສານ ທີ່ຕ້ອງການໃຫ້ ຄະນະຮັບຜິດຊອບຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ສະມາຊິກສະພາແຫ່ງຊາດ, ສະພາປະຊາຊົນຂັ້ນ ແຂວງ, ອົງການອື່ນຂອງລັດ, ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**